ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICE, ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016

ບົດຝຶກຫັດ ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ຊັ້ນອະນຸບານສຶກສາປີທີ 3 2016

ບົດຝຶກຫັດ

# ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ປຶ້ມເຝິກຫັດ

# ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ເກດ ພັນລັກ

ເຂົ້າໜ້າໂດຍ: ທອງດຳ ທອງສິນ
ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປື້ມບົດເຝິກຫັດໜ່ວຍສິ່ງຕ່າງໆອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດ ທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປື້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງບ້ານມີດັ່ງນີ້:

1. ເຄື່ອງທີ່ເຮັດດ້ວຍໄມ້, ປຼາດສະຕິກ, ໜັງ, ຝ້າຍ, ໄໝ ແລະ ຂົນສັດ.
2. ເຄື່ອງທີ່ເຮັດດ້ວຍໄມ້, ປຼາດສະຕິກ, ເຫຼັກ, ແກ້ວ.
3. ນ້ຳ, ແສງ, ສຽງ.
4. ສີ.

ການນຳໃຊ້ປື້ມບົດເຝິກຫັດເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນ ນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍ ໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປື້ມຫົວນີ້ດ້ວຍຕົນເອງ ໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປື້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປື້ມບົດເຝິກຫັດດັ່ງກ່າວໃຫ້ມີ ຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


**ຫົວຂໍ້** **ໜ້າ**

**1. ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ...... 1**

**2. ສິ່ງທີ່ເຮັດດ້ວຍໄມ້, ປລາສະຕິກ, ໜັງ, ຝ້າຍ, ໄໝ ແລະ ຂົນສັດ ອາ...... 2**

- ເຄື່ອງຫຼິ້ນໃນຫ້ອງຮຽນ ...... 3
- ເຄື່ອງຫຼິ້ນ ...... 4
- ຄຸນປະໂຫຍດຂອງເຄື່ອງຫຼິ້ນ ...... 5
- ເຄື່ອງຮຽນ ...... 6
- ຄຸນປະໂຫຍດຂອງເຄື່ອງຮຽນ ...... 7
- ເຄື່ອງໃຊ້ໃນຫ້ອງຮຽນ...... 8
- ເຄື່ອງນຸ່ງຮົ່ມ ...... 9

**2. ເຄື່ອງທີ່ເຮັດດ້ວຍໄມ້, ປລາສະຕິກ, ເຫຼັກ ແລະ ແກ້ວ ອາທິດທີ 2...... 10**

- ເຄື່ອງມືຊາວນາ, ຊາວສວນ ...... 11
- ຄຸນປະໂຫຍດເຄື່ອງມືຊາວນາ, ຊາວສວນ ...... 12
- ເຄື່ອງມືສ້ອມແປງລົດ ...... 13
- ຄຸນປະໂຫຍດເຄື່ອງມືສ້ອມແປງລົດ ...... 14
- ເຄື່ອງມືກໍ່ສ້າງ ...... 15
- ຄຸນປະໂຫຍດເຄື່ອງມືກໍ່ສ້າງ ...... 16
- ເຄື່ອງມືແຕ່ງກິນ ...... 17
- ຄຸນປະໂຫຍດເຄື່ອງມືແຕ່ງກິນ ...... 18
- ເຄື່ອງມືເສີມສວຍ ...... 19
- ຄຸນປະໂຫຍດເຄື່ອງມືເສີມສວຍ ...... 20

**3. ນ້ຳ, ແສງ, ສຽງ ອາທິດທີ 3...... 21**

- ນ້ຳ ແລະ ນ້ຳມັນ ...... 22
- ຄຸນປະໂຫຍດຂອງນ້ຳ ແລະ ນ້ຳມັນ ...... 23
- ການປ່ຽນແປງຂອງນ້ຳ ...... 24
- ສິ່ງທີ່ລະລາຍຕົວ ແລະ ບໍ່ລະລາຍຕົວໃນນ້ຳ ...... 25
- ການປົກປັກຮັກສານ້ຳ ...... 26
- ແສງ ...... 27
- ຄຸນປະໂຫຍດຂອງແສງ ...... 28
- ສຽງ ...... 29

- ສີ ........................................................................................................................ 30
- ສິ່ງທີ່ມີສີ ແລະ ບໍ່ມີສີ .................................................................................................... 31
- ສີທຳມະຊາດ ແລະ ສີປຸງແຕ່ງ ........................................................................................ 32
- ການປ່ຽນແປງຂອງສີ ...................................................................................................... 33
- ສີພືດທີ່ກິນໄດ້.................................................................................................................... 34
- ສີເຄື່ອງດື່ມ ........................................................................................................................ 35

# ສິ່ງຕ່າງໆອ້ອມຕົວເຮົາ











**ຫົວຂໍ້ການຮຽນຂອງແຕ່ລະອາທິດໜ່ວຍສິ່ງຕ່າງໆອ້ອມຕົວເຮົາປະກອບມີ:**

1. ເຄື່ອງທີ່ເຮັດດ້ວຍໄມ້, ປລາສະຕິກ, ໜັງ, ຝ້າຍ, ໄໝ ແລະ ຂົນສັດ.
2. ເຄື່ອງທີ່ເຮັດດ້ວຍໄມ້, ປລາສະຕິກ, ເຫຼັກ, ແກ້ວ.
3. ນ້ຳ, ແສງ, ສຽງ.
4. ສີ.

# ເຄື່ອງທີ່ເຮັດດ້ວຍໄມ້, ປຼາສະຕິກ, ໜັງ, ຝ້າຍ, ໄໝ ແລະ ຂົນສັດ









**ຫົວຂໍ້ການຮຽນອາທິດທີ 1 ເຄື່ອງທີ່ເຮັດດ້ວຍໄມ້, ປຼາສະຕິກ, ໜັງ, ຝ້າຍ, ໄໝ ແລະ ຂົນສັດ.**

1. ເຄື່ອງຫຼິ້ນໃນຫ້ອງຮຽນ.
2. ເຄື່ອງຫຼິ້ນໃນເດີ່ນ.
3. ເຄື່ອງຮຽນ.
4. ເຄື່ອງໃຊ້ໃນຫ້ອງຮຽນ.
5. ເຄື່ອງນຸ່ງຫົ່ມ.

# ເຄື່ອງຫຼິ້ນໃນຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນ ແລະ ບອກປະເພດຄື: ໄມ້, ປລາດສະຕິກ, ຝ້າຍ, ໄໝ ຫຼື ຂົນສັດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງຫຼິ້ນໃນຫ້ອງຮຽນມີຫຍັງແດ່? ເຄື່ອງຫຼິ້ນແຕ່ລະປະເພດເຮັດດ້ວຍຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃນຫ້ອງຮຽນປະກອບມີຕຸກກະຕາ, ຊຸດບັ້ອກ, ຊຸດແຕ່ງກິນ, ຊຸດພະຍາບານ; ຕຸກກະຕາເຮັດດ້ວຍປລາດສະຕິກ ແລະ ເຄື່ອງນຸ່ງຕຸກກະຕາເຮັດດ້ວຍຝ້າຍ, ໄໝ ຫຼື ຂົນສັດ; ຊຸດບັ້ອກເຮັດດ້ວຍໄມ້ ຫຼື ປລາດສາະຕິກ; ຊຸດແຕ່ງກິນເຮັດ້ວຍປລາດສະຕິກ ແລະ ຊຸດພະຍາບານເຮັດດ້ສວນຝ້າຍ.
- ໃຫ້ເດັກນ້ອຍທາສີຮູບພາບວັດຖຸໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນໃນເດີ່ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ຄຸນປະໂຫຍດຂອງເຄື່ອງຫຼິ້ນໃນເດີ່ນ; ເຝິກທັກສະການເວົ້າ.
**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຫຼິ້ນເຄື່ອງຫຼິ້ນໃນເດີ່ນມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງຫຼິ້ນໃນເດີ່ນມີໂອ້ນຊາ, ມ້າໝູນ, ຕະລູດ, ເດື່ອງດາງ; ເຄື່ອງຫຼິ້ນໃນເດີ່ນມີຄຸນປະໂຫຍດເຊັ່ນ: ໂອ້ນຊາໃຊ້ໄວ້ຂີ່ແກວ່ງໄປທາງໜ້າ ແລະ ທາງຫຼັງ; ມ້າໝູນໃຊ້ໄວ້ຂີ່ໝູນເປັນວົງມົນ; ຕະລູດໃຊ້ໄວ້ນັ່ງ ແລະ ເລື່ອນຕົນຕົວແຕ່ເທິງລົງລຸ່ມ; ເດື່ອງດາງໃຊ້ໄວ້ນັ່ງໃຫ້ໄມ້ຍົກຂຶ້ນ ແລະ ລົງ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງຫຼິ້ນຕ່າງໆໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່, ຮູບຮ່າງ ແລະ ຄຸນປະໂຫຍດຂອງເຄື່ອງຫຼິ້ນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງຫຼິ້ນແຕ່ລະປະເພດມີຮູບຮ່າງແນວໃດ? ເຄື່ອງຫຼິ້ນມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ໝາກບານເປັນຮູບໜ່ວຍມົນ, ບ໋ອກເປັນຮູບກ້ອນສາມແຈ, ກ້ອນສີ່ແຈ, ທໍ່ກົມ; ຕຸກກະຕາໝີ ຫົວເປັນໜ່ວຍມົນ, ຂາເປັນທໍ່ກົມ.
- ຄຸນປະໂຫຍດຂອງເຄື່ອງຫຼິ້ນ ໝາກບານໃຊ້ໄວ້ໂຍນ, ເຕະ; ບ໋ອກໃຊ້ໄວ້ຕໍ່; ຕຸກກະຕາໃຊ້ໄວ້ຫຼິ້ນບົດບາດສົມມຸດເປັນສັດ ຫຼື ຄົນ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງຫຼິ້ນໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຮຽນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຂອງເຄື່ອງຮຽນ ແລະ ບອກປະເພດໄມ້, ປລາດສະຕິກ ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງຮຽນຂອງຫຼານມີສິ່ງໃດແດ່? ເຄື່ອງຮຽນເຮັດດ້ວຍຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຮຽນມີປື້ມ, ບິກ, ສໍດຳ, ສໍສີ, ຢາງລຶບ, ໄມ້ບັນທັດ; ປື້ມ, ສໍສີ, ສໍດຳເຮັດດ້ວຍໄມ້; ໄມ້ບັນທັດເຮັດດ້ວຍໄມ້ ຫຼື ປລາດສະຕິກ; ບິກ, ຢາງລຶບເຮັດດ້ວຍປລາດສະຕິກ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງຮຽນໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງເຄື່ອງຮຽນ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເຄື່ອງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ສໍດຳ, ສໍສີ, ປຶ້ມໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສໍດຳໃຊ້ໄວ້ແຕ້ມຮູບ ແລະ ຂຽນ; ສໍສີໃຊ້ໄວ້ທາສີຮູບພາບ ແລະ ປຶ້ມໃຊ້ໄວ້ແຕ້ມຮູບ ແລະ ຂຽນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່, ປະເພດ, ຄຸນປະໂຫຍດ, ເຄື່ອງໃຊ້ໃນຫ້ອງຮຽນ, ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງຮຽນມີຄຸນປະໂຫຍດແນວໃດ? ມີປະເພດໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຊື່ເຄື່ອງໃຊ້ໃນຫ້ອງຮຽນມີກະດານ, ໂຕະ, ຕັ່ງ, ຄຸນ້ຳ, ຈອກ, ຜ້າເຊັດມື; ເຄື່ອງໃຊ້ໃນຫ້ອງຮຍນເຊັ່ນ: ກະດານ, ໂຕະ, ຕັ່ງເຮັດດ້ວຍໄມ້; ຄຸ, ຈອກເຮັດດ້ວຍປຼາດສະຕິກ; ຜ້າເຊັດມືເຮັດດ້ວຍຝ້າຍ; ຄຸນປະໂຫຍດເຄື່ອງໃຊ້ໃນຫ້ອງຮຍນເຊັ່ນ: ກະດານໃຊ້ໄວ້ຂຽນ; ໂຕະຮອງຂຽນ, ຕັ່ງນັ່ງ, ຄຸນ້ຳໃຊ້ໄວ້ໃສ່ນ້ຳ; ຈອກໃຊ້ ໄວ້ຕັກນ້ຳ ແລະ ຜ້າໃຊ້ໄວ້ເຊັດມື.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງຫົ່ມ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່, ປະເພດ ແລະ ລັກສະນະເຄື່ອງນຸ່ງຍາມຮ້ອນ ແລະ ຍາມໜາວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງນຸ່ງຫົ່ມແຕ່ລະຢ່າງເຮັດດ້ວຍຫຍັງ? ເຄື່ອງນຸ່ງຫົ່ມມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຄື່ອງນຸ່ງຫົ່ມມີ ໂສ້ງ, ເສື້ອ, ສິ້ນ, ກະໂປງ; ເຄື່ອງນຸ່ງຍາມຮ້ອນມີລັກສະນະບາງ ເຮັດດ້ວຍຝ້າຍ ແລະ ໄໝ; ເຄື່ອງນຸ່ງໃນຍາມໜາວມີລັກສະນະໜາ ເຮັດດ້ວຍນິລົງ, ຂົນສັດ, ແລນ ແລະ ຝ້າຍ.
- ໃຫ້ເດັກນ້ອຍທາຮູບພາບເຄື່ອງນຸ່ງ ແລະ ເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ເຄື່ອງທີ່ເຮັດດ້ວຍໄມ້, ປຼາສະຕິກ, ເຫຼັກ, ແກ້ວ











**ຫົວຂໍ້ການຮຽນອາທິດທີ 2 ເຄື່ອງທີ່ເຮັດດ້ວຍໄມ້, ປຼາດສະຕິກ, ເຫຼັກ ແລະ ແກ້ວ.**

1. ເຄື່ອງມືຊາວນາ, ຊາວສວນ.
2. ເຄື່ອງມືສ້ອມແປງລົດ.
3. ເຄື່ອງມືກໍ່ສ້າງ.
4. ເຄື່ອງມືແຕ່ງກິນ.
5. ເຄື່ອງມືເສີມສວຍ.

# ເຄື່ອງມືຊາວນາ, ຊາວສວນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຂອງເຄື່ອງມືຊາວນາ, ຊວສວນ ແລະ ບອກປະເພດໄມ້, ເຫຼັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຮືອນຂອງຫຼານມີເຄື່ອງມືແບບນີ້ບໍ? ເຄື່ອງມືແຕ່ລະຢ່າງເຮັດດ້ວຍຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງມືຊາວນາ ແລະ ຊາວສວນມີ ໄຖ, ຄາດ, ກ່ຽວ, ຈົກ, ສຽມ, ບົວຫົດຜັກ, ພ້າ, ຊວ້ານ, ໄຖ, ຈົກ, ສຽມ, ກ່ຽວ, ພ້າ; ຊວ້ານເຮັດດ້ວຍເຫຼັກ ແລະ ໄມ້; ຄາດເຮັດດ້ວຍໄມ້; ບົວຫົດຜັກດຮັດດ້ວຍເຫຼັກ ຫຼື ສັງກະສີ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມືໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດເຄື່ອງມືຊາວນາ, ຊາວສວນ











**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເຄື່ອງມືຊາວນາ, ຊາວສວນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງມືຊາວນາ, ຊາວສວນມີປະເພດໃດແດ່? ມີຮູບຮ່າງແນວໃດ? ໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ປະເພດຂອງເຄື່ອງມືຊາວນາ, ຊາວສວນ; ຄຸນປະໂຫຍດເຊັ່ນ ໄຖໃຊ້ໄວ້ໄຖນາ; ຄາດໃຊ້ໄວ້ຄາດນາ; ກ່ຽວໃຊ້ໄວ້ກ່ຽວເຂົ້າ; ຈົກ, ສຽມໃຊ້ໄວ້ຂຸດດິນ; ຊວ້ານໃຊ້ໄວ້ຊວ້ານດິນ; ບົວໃຊ້ໄວ້ຫົດຜັກ; ພ້າໃຊ້ໄວ້ຖາງຫຍ້າ ແລະ ຟັນໄມ້.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ແລະ ສັດໂດຍນຳໃຊ້ສີຕາມໃຈ.

# ເຄື່ອງມືສ້ອມແປງລົດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ປະເພດວັດສະດຸຂອງເຄື່ອງມືສ້ອມແປງລົດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງມືສ້ອມແປງລົດແຕ່ລະຢ່າງເຮັດດ້ວຍຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງມືສ້ອມແປງມີຄີມ, ໂຕລະບິດ, ກະແຈປາກ, ກະແຈບ້ວງ, ກະແຈເລື່ອນ; ເຄື່ອງມືສ້ອມແປງລົດແຕ່ລະຢ່າງ ເຮັດດ້ວຍເຫຼັກ ແລະ ປລາດສະຕິກ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມືໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງເຄື່ອງມືສ້ອມແປງລົດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເຄື່ອງມືສ້ອມແປງລົດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືສ້ອມແປງລົດມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງເຄື່ອງມືສ້ອມແປງລົດເຊັ່ນ: ຄີມໃຊ້ໄວ້ໜີບ; ໂຕລະບິດໃຊ້ໄວ້ຫັນ; ກະແຈປາກ ແລະ ກະແຈບ້ວງ, ກະແຈເລື່ອນໃຊ້ໄວ້ຫັນນອດ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມື ແລະ ລົບໂດຍນຳໃຊ້ສີຕາມໃຈ.

# ເຄື່ອງມືກໍ່ສ້າງ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ບອກປະເພດວັດສະດຸຂອງເຄື່ອງມືກໍ່ສ້າງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືກໍ່ສ້າງໃນຮູບນີ້ແຕ່ລະຢ່າງຊື່ວ່າແນວໃດ? ຫຼານເຄີຍຈັບບາຍເບິ່ງເຄື່ອງມືກໍ່ສ້າງບໍ່? ເຄື່ອງມືກໍ່ສ້າງເຮັດດ້ວຍຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງມືກໍ່ສ້າງມີຄ້ອນຕີ, ເລື່ອຍ, ຊວ້ານ, ໄມ້ບັນທັດ, ເຊືອກວັດ, ໄມ້ສາມລ່ຽມ, ມີປະທາຍ, ຄຸ; ຄ້ອນຕີ, ມີປະທາຍ, ຊວ້ານ, ເຊືອກວັດເຮັດດ້ວຍເຫຼັກ ແລະ ໄມ້; ໄມ້ບັນທັດ, ຄຸເຮັດດ້ວຍປຼາດສະຕິກ; ໄມ້ສາມລ່ຽມເຮັດດ້ວຍໄມ້.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມືໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງເຄື່ອງມືກໍ່ສ້າງ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເຄື່ອງມືກໍ່ສ້າງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງມືກໍ່ສ້າງແຕ່ລະຢ່າງໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງມືກໍ່ສ້າງມີຄ້ອນຕີໃຊ້ໄວ້ຕອກເຫຼັກຕາປູ; ເລື່ອຍໃຊ້ໄວ້ເລື່ອຍໄມ້; ຊວ້ານໃຊ້ໄວ້ຊວ້ານຊີມັງ; ເຊືອກວັດ ຫຼື ໄມ້ບັນທັດໃຊ້ໄວ້ແທກລວງຍາວ; ລວງກວ້າງໄມ້ສາມລ່ຽມໃຊ້ໄວ້ປັດໜ້າພຽງ; ມີປະທາຍໃຊ້ໄວ້ຕັກຊີມັງເພື່ອກໍ່ ຫຼື ໂບກຝາເຮືອນ, ຄຸໃຊ້ໄວ້ໃສ່ຊີມັງ.
- ໃຫ້ເດັກນ້ອຍທາສີຮູບພາບຄົນກຳລັງເຮັດວຽກໂດຍນຳໃຊ້ສີຕາມໃຈ.

# ເຄື່ອງມືແຕ່ງກິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງມືແຕ່ງກິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືແຕ່ງກິນໃນຮູບນີ້ແຕ່ລະຢ່າງຊື່ວ່າແນວໃດ? ຫຼານເຄີຍຈັບບາຍເຄື່ອງມືແຕ່ງກິນບໍ່?
- ໃຫ້ເດັກນ້ອຍສະຫຼຸບ: ຊື່ເຄື່ອງມືແຕ່ງກິນມີເຕົາໄຟ, ໝໍ້, ບ່ວງ, ຈອງ, ມີດ, ຂຽງ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມືໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງເຄື່ອງມືແຕ່ງກິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດ, ຮູບຮ່າງ, ຄຸນປະໂຫຍດຂອງເຄື່ອງມືແຕ່ງກິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືແຕ່ງກິນແຕ່ລະປະເພດໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ໝໍ້ໃສ່ໄວ້ແຕ່ງກິນ, ...; ເຕົາໄຟໃຊ້ໄວ້ດັງໄຟ ຫຸງ, ຕົ້ມອາຫານໃຫ້ສຸກ; ບ່ວງ, ຈອງໃຊ້ໄວ້ຕັກແກງ...; ຂຽງໃຊ້ໄວ້ຮອງຊອຍຜັກ, ຊີ້ນ, ປາ, ... ຄຸນປະໂຫຍດເຄື່ອງມືແຕ່ງກິນໃຊ້ໄວ້ສຳລັບແຕ່ງກິນ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ແລະ ເຄື່ອງມືໂດຍນຳໃຊ້ສີຕາມໃຈ.

# ເຄື່ອງມືເສີມສວຍ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ປະເພດວັດສະດຸຂອງເຄື່ອງມືເສີມສວຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືເສີມສວຍໃນຮູບນີ້ແຕ່ລະຢ່າງຊື່ວ່າແນວໃດ? ຫຼານເຄີຍຈັບບາຍເຄື່ອງມືເສີມສວຍອັນໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງມືເສີມສວຍມີຫວີ, ແວ່ນ, ໄດເປົ່າຜົມ, ໄດລີດຜົມ, ມີດຕັດ, ມີດຕັດເລັບ, ຕຽງນອນສະຜົມ: ຫວີເຮັດດ້ວຍຢາງ; ແວ່ນເຮັດດ້ວຍແກ້ວ ແລະ ຢາງ; ມີດຕັດເລັບເຮັດດ້ວຍເຫຼັກ ຫຼື ສະເຕັນເລັດ; ໄດເປົ່າຜົມ, ໄດລີດຜົມ, ມັດຕັດ ເຮັດດ້ວຍຢາງ ແລະ ເຫຼັກ ຫຼື ສະເຕັນເລັດ; ຕຽງນອນສະຜົມ ເຮັດດ້ວຍເຫຼັກ ແລະ ປູາດສະຕິກ.
- ໃຫ້ເດັກນ້ອຍທາສີຮູບພາບເຄື່ອງມືໂດຍໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງເຄື່ອງມືເສີມສວຍ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເຄື່ອງມືເສີມສວຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງມືເສີມສວຍແຕ່ລະຢ່າງໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຫວີໄວ້ຫວີຜົມ; ແວ່ນໃຊ້ໄວ້ແຍງຕົນຕົວ; ມີດຕັກເລັບໃຊ້ໄວ້ຕັດເລັບມື ແລະ ໂລບຕີນ; ໄດໃຊ້ໄວ້ເປົ່າຜົມ ແລະ ຣີດຜົມ; ຕຽງນອນໃຊ້ໄວ້ນອນສະຜົມ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ເຄື່ງມືໂດຍນຳໃຊ້ສີຕາມໃຈ.

# ນ້ຳ, ແສງ, ສຽງ








**ຫົວຂໍ້ການຮຽນອາທິດທີ 3 ນ້ຳ, ແສງ, ສຽງ:**

1. ນ້ຳ ແລະ ນ້ຳມັນ.
2. ການປ່ຽນແປງຂອງນ້ຳ.
3. ສິ່ງທີ່ລະລາຍຕົວໃນນ້ຳ ແລະ ບໍ່ລະລາຍຕົວໃນນ້ຳ.
4. ແສງ.
5. ສຽງ.

# ນ້ຳ ແລະ ນ້ຳມັນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກນ້ຳ, ນ້ຳມັນ ແລະ ລັກສະນະ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ນ້ຳແຕ່ລະຢ່າງໃນຮູບນີ້ຊື່ວ່າແນວໃດ? ຫຼານເຄີຍທົດລອງຈັບບາຍ, ດົມ ແລະ ຊີມລົດຊາດຂອງນ້ຳບໍ່? ນ້ຳມັນມີຫຍັງແດ່? ມີລັກສະນະແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ໃນຮູບພາບມີນ້ຳນົມ, ນ້ຳຝົນ, ນ້ຳດື່ມ, ນ້ຳໃຊ້; ນ້ຳມັນມີນ້ຳມັນພືດ, ນ້ຳມັນລົດ; ລັກສະນະຂອງນ້ຳເປັນວັດຖຸແຫຼວ, ນ້ຳບໍ່ມີສີ, ບໍ່ມີກິ່ນ, ບໍ່ມີລົດຊາດ; ນ້ຳມັນພືດ ຫຼື ນ້ຳມັນລົດມີລັກສະນະນ້ຳມັນເປັນວັດຖຸແຫຼວມີສີແດງ, ບົວ, ເຫຼືອງ, ມີກິ່ນຂິວ.
- ໃຫ້ເດັກນ້ອຍທາສີຮູບພາບວັດຖຸແຫຼວໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງນ້ຳ ແລະ ນ້ຳມັນ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງນ້ຳ ແລະ ນ້ຳມັນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນ້ຳ ແລະ ນ້ຳມັນມີ ຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງນ້ຳເປັນບ່ອນອາໄສຂອງສັດນ້ຳ, ຄົນ, ສັດໃຊ້ໄວ້ດື່ມ, ອາບ, ລ້າງສິ່ງຂອງຕ່າງໆ, ໃຊ້ປຸງແຕ່ງອາຫານ, ພືດດູດນ້ຳລ້ຽງລຳຕົ້ນ ແລະ ໃບ; ຄຸນປະໂຫຍດຂອງນ້ຳມັນ: ໃຊ້ໄວ້ໃສ່ລົດ ຫຼື ເຄື່ອງຈັກອື່ນໆ; ນ້ຳມັນພືດໃຊ້ໄວ້ປຸງແຕ່ງອາຫານ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ສັດໂດຍນຳໃຊ້ສີຕາມໃຈ.

# ການປ່ຽນແປງຂອງນ້ຳ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປ່ຽນແປງ, ສີ, ປະລິມານຂອງນ້ຳ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນ້ຳປ່ຽນແປງຮູບຮ່າງແນວໃດ? ນ້ຳປ່ຽນແປງສີແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຮູບຮ່າງນ້ຳສາມາດປ່ຽນແປງໄດ້ຕາມພາຊະນະທີ່ບັນຈຸເປັນຮູບໜ່ວຍມົນ, ກ້ອນສີ່ແຈ, ກ້ອນສາມແຈ, ທໍ່ກົມ; ສີນ້ຳຖ້າມີການປະສົມສີສາມາດປ່ຽນແປງໄດ້ເຊັ່ນ: ສີແດງ, ເຫຼືອງ, ຟ້າ, ຂຽວ, ບົວ, ດຳ, ຂາວ; ປະລິມານນ້ຳ: ໜ້ອຍ, ຫຼາຍ, ເທົ່າກັນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ສິ່ງທີ່ລະລາຍຕົວ ແລະ ບໍ່ລະລາຍຕົວໃນນ້ຳ

**1. ສິ່ງທີ່ລະລາຍຕົວໃນນ້ຳ**




**2. ສິ່ງທີ່ບໍ່ລະລາຍຕົວນນ້ຳ**




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງທີ່ລະລາຍ ແລະ ບໍ່ລະລາຍຕົວໃນນ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນສິ່ງທີ່ລະລາຍຕົວ ແລະ ບໍ່ລະລາຍໃນນ້ຳມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສິ່ງທີ່ລະລາຍຕົວໃນນ້ຳມີນ້ຳຕານ ແລະ ເກືອ; ສິ່ງທີ່ບໍ່ລະລາຍຕົວໃນນ້ຳມີແປ້ງ, ດິນຊາຍ, ນ້ຳມັນ.
- ໃຫ້ເດັກນ້ອຍທາສີຮູບພາບເກືອ, ນ້ຳຕານ, ນ້ຳມັນໂດຍນຳໃຊ້ສີຕາມໃຈ.

# ການປົກປັກຮັກສານ້ຳ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປົກປັກຮັກສານ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປົກປັກຮັກສານ້ຳແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປົກປັກຮັກສາແມ່ນຮັກສານ້ຳບໍ່ໃຫ້ເນົ່າເໝັ່ນ ຫຼື ເປັນພິດ ໂດຍການບໍ່ຖິ້ມສິ່ງເປິເປື້ອນ ແລະ ສິ່ງທີ່ບໍ່ລະລາຍຕົວລົງໃນແມ່ນ້ຳ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອນ ແລະ ຄົນໂດຍໃຊ້ສີຕາມໃຈ.

# ແສງ

## 1. ສິ່ງທີ່ມີແສງໃນຕົວ



## 2. ສິ່ງທີ່ບໍ່ມີແສງໃນຕົວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງທີ່ມີແສງ ແລະ ບໍ່ມີແສງຢູ່ໃນຕົວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນສິ່ງທີ່ມີແສງ ແລະ ບໍ່ມີແສງຢູ່ໃນຕົວມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສິ່ງທີ່ມີແສງຢູ່ໃນຕົວມີດວງອາທິດ; ດອກໄຟ, ໄຟສາຍ ແລະ ຕະກຽງທີ່ໄດ້ໄຕ້; ສິ່ງທີ່ບໍ່ມີແສງໃນຕົວມີເຄື່ອງນຸ່ງ, ໂຕະ, ຕັ່ງ, ພັດລົມ.
- ໃຫ້ເດັກນ້ອຍທາສີຮູບພາບສິ່ງຕ່າງໆໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງແສງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງແສງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄຸນປະໂຫຍດຂອງແສງມີຫຍັງແດ່?
- ໃຫ້ເດັກນ້ອຍ ແລ ຄູສະຫຼຸບ: ຄຸນປະໂຫຍດຂອງແສງເຮັດໃຫ້ເຮົາເບິ່ງເຫັນສິ່ງຕ່າງໆ ແລະ ຫຸງຕົ້ມອາຫານ, ໃຫ້ແສງສະຫວ່າງ.
- ໃຫ້ເດັກນ້ອຍທາສີຮູບພາບຕາເວັນ ແລະ ຄົນແຕ່ງກິນໂດຍນຳໃຊ້ສີຕາມໃຈ.

# ສຽງ

## 1. ສຽງທຳມະຊາດ



## 2. ສຽງທີ່ຄົນສ້າງຂຶ້ນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສຽງທຳມະຊາດ, ສຽງທີ່ຄົນສ້າງຂຶ້ນ, ບອກຄຸນປະໂຫຍດ ຂອງສຽງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສຽງທຳມະຊາດມີຫຍັງແດ່? ສຽງທີ່ຄົນສ້າງຂຶ້ນມີຫຍັງແດ່? ຄຸນປະໂຫຍດຂອງສຽງມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສຽງທຳມະຊາດປະກອບມີສຽງສັດຮ້ອງ, ຟ້າຮ້ອງ, ລົມພັດ ແລະ ສຽງນ້ຳຕົກຕາດ; ສຽງທີ່ຄົນສ້າງຂຶ້ນປະກອບມີສຽງດົນຕີ, ສຽງຄົນຮ້ອງ ແລະ ສຽງລົດແລ່ນ; ຄຸນປະໂຫຍດ ເຮັດໃຫ້ເຮົາໄດ້ຍິນສຽງດັງແຮງ, ຄ່ອຍ, ມ່ວນ ແລະ ບໍ່ມ່ວນ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ, ລົດ ແລະ ທຳມະຊາດໂດຍນຳໃຊ້ສີຕາມໃຈ.

# ສີ









**ຫົວຂໍ້ການຮຽນອາທິດທີ 4 ສີ:**

1. ສິ່ງທີ່ມີສີ ແລະ ບໍ່ມີສີ.
2. ສີທຳມະຊາດ ແລະ ສີປຸງແຕ່ງ.
3. ການປ່ຽນແປງຂອງສີ.
4. ສີຜືດທີ່ກິນໄດ້.
5. ສີເຄື່ອງດື່ມ.

# ສິ່ງທີ່ມີສີ ແລະ ບໍ່ມີສີ

## 1. ສິ່ງທີ່ບໍ່ມີສີ



## 2. ສິ່ງທີ່ມີສີ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງທີ່ມີສີ ແລະ ບໍ່ມີສີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສິ່ງທີ່ມີສີ ແລະ ບໍ່ມີສີມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສິ່ງທີ່ມີສີມີຕົ້ນໄມ້, ດອກໄມ້, ເຄື່ອງນຸ່ງ, ອາຫານ, ລົດ, ກ້ອນຫີນ, ສັດ, ເຮືອນ, ຜົມ; ສິ່ງທີ່ບໍ່ມີສີມີແກ້ວໃສ, ປລາສະຕິກໃສ, ນ້ຳ, ອາກາດບໍລິສຸດ
- ໃຫ້ເດັກນ້ອຍທາສີຮູບສິ່ງທີ່ມີສີ ແລະ ບໍ່ມີສີໂດຍນຳໃຊ້ສີຕາມໃຈ.

# ສີທຳມະຊາດ ແລະ ສີປຸງແຕ່ງ

## 1. ສີທຳມະຊາດ



## 1. ສີປຸງແຕ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສີທຳມະຊາດ ແລະ ສີທີ່ປຸງແຕ່ງ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສີທີ່ເຮົາເຫັນ ແລະ ສີທີ່ປຸງແຕ່ງມີສີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສີທຳມະຊາດໄດ້ຈາກດອກໄມ້, ໝາກໄມ້, ໃບໄມ້, ກ້ອນຫີນ, ຂົນສັດ, ຜົມ; ສີປຸງແຕ່ງ, ສີຍ້ອມເຄື່ອງນຸ່ງ, ສີພົ່ນລົດ , ສີທາເຮືອນ.
- ໃຫ້ເດັກນ້ອຍທາສີຮູບດອກໄມ້, ໝາກໄມ້, ໃບໄມ້, ລົດ, ເຮືອນ, ເຄື່ອງນຸ່ງໂດຍນຳໃຊ້ສີຕາມໃຈ.

# ການປ່ຽນແປງຂອງສີ

| | | | | |
|---|---|---|---|---|
| ສີແດງ | ປະສົມ | ສີເຫຼືອງ | ໄດ້ | ສີນ້ຳໝາກກ້ຽງ |
| ສີຟ້າ | ປະສົມ | ສີເຫຼືອງ | ໄດ້ | ສີຂຽວ |
| ສີແດງ | ປະສົມ | ສີຟ້າ | ໄດ້ | ສີບົວ |

**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປ່ຽນແປງຂອງສີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍທາສີຮູບຕາມສີກຳນົດໄວ້ ຕອບຄຳຖາມດັ່ງນີ້: ສີແດງປະສົມສີເຫຼືອງໄດ້ສີຫຍັງ? ສີຟ້າປະສົມສີເຫຼືອງໄດ້ສີຫຍັງ? ສີແດງປະສົມສີຟ້າໄດ້ສີຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ສີປະສົມກັນສອງສີ ຈະປ່ຽນເປັນສີໃໝ່ເຊັ່ນ: ສີແດງປະສົມສີເຫຼືອງໄດ້ສີນ້ຳໝາກກ້ຽງ, ສີຟ້າປະສົມສີເຫຼືອງໄດ້ສີຂຽວ, ສີແດງປະສົມສີຟ້າໄດ້ສີບົວ.

# ສີພືດທີ່ກິນໄດ້



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສີພືດທີ່ກິນໄດ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສີພືດທີ່ກິນໄດ້ມາຈາກໃສ? ຫຼານເຄີຍເຫັນມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສີພືດທີ່ກິນໄດ້ມາຈາກພືດ ມີໃບເຕີຍ, ໜໍ່ນ້ອຍ, ຢານາງ, ຜັກໜອກ (ສີຂຽວ); ໄດ້ມາຈາກດອກພືດ: ດອກອັນຊັນ (ສີມ່ວງ), ດອກສົ້ມພໍດີ (ສີແດງ); ໄດ້ຈາກໝາກພືດມີ ໝາກຜັກປັງ (ສີມ່ວງ), ໝາກເລັ່ນ, ໝາກເຜັດ (ສີແດງ), ໝາກຕູມ ໄດ້ມາຈາກຫົວມີ ຂີ້ໝິ້ນ (ສີເຫຼືອງ), ຫົວບົວ (ສີແດງ).
- ໃຫ້ເດັກນ້ອຍທາສີຮູບພາບສີຂອງພືດໂດຍນຳໃຊ້ສີຕາມໃຈ.

# ສີເຄື່ອງດື່ມ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສີເຄື່ອງດື່ມປະເພດນົມ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນໍ້ານົມມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ນໍ້ານົມງົວ, ແບ້ ເປັນສີຂາວ, ແຕ່ນົມກ່ອງຈະມີສີເຫຼືອງບົວ ຕາມສີຂອງໝາກໄມ້ນໍາມາປະສົມກັບນໍ້ານົມ.
- ໃຫ້ເດັກນ້ອຍທາສີຮູບພາບສັດໂດຍນໍາໃຊ້ສີຕາມໃຈ.

# ສີເຄື່ອງດື່ມ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສີຂອງເຄື່ອງດື່ມປະເພດນ້ຳໝາກໄມ້ ແລະ ນ້ຳອັດລົມ; ເຝິກທັກສະພາບເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງດື່ມມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງດື່ມປະເພດນ້ຳໝາກໄມ້ ມີສີຂຽວ, ເຫຼືອງ, ນ້ຳໝາກກ້ຽງ; ເຄື່ອງດື່ມປະເພດນ້ຳອັດລົມ ມີສີດຳ, ແດງ, ຂຽວ, ເຫຼືອງ.
- ຫ້ເດັກນ້ອຍທາສີຮູບພາບເຄື່ອງດື່ມໂດຍນຳໃຊ້ສີທີ່ກຳນົດ.